大学老挝语专业教材

# 老挝语阅读

第二册

吴正明　编

中国人民解放军外国语学院

一九九六年四月

ສາລະບານ


ບົດທີ ໑ ແຂວງຊຽງຂວາງ ........................ ໑

ບົດທີ ໒ ແຂວງຫົວພັນ ........................ ໗

ບົດທີ ໓ ແຂວງວຽງຈັນ ........................ ໑໓

ແຂວງຄຳມ່ວນ ........................ ໑໖

ບົດທີ ໔ ແຂວງສະຫວັນນະເຂດ ........................ ໒໑

ບົດທີ ໕ ມາລະຍາດແຫ່ງສັງຄົມ

(໑) ມາລະຍາດໃນການຮັບຂັບເຊີນ ............ ໒໗

(໒) ມາລະຍາດໃນການສູບຢາ ............... ໓໐

ບົດທີ ໖ (໑) ມາລະຍາດຂອງຄົນນະຄອນຫລວງ .......... ໓໕

(໒) ພ້ອມກັນຮັກສາຄວາມເປັນລະບຽບຮຽບຮ້ອຍ

ຂອງສັງຄົມ ..... ໔໒

ບົດທີ ໗ ວິລະຊົນເຫ່ງຊົນຊາດຊົນເຜົ່າໃນປະຫວັດສາດລາວ..... ໔໖

ບົດທີ ໘ ວັນປະກາດເອກະລາດຂອງຊາດລາວ ............ ໕໘

ບົດທີ ໙ ວັນຊາດ ໒ ທັນວາ ........................ ໖໗

ສາລະບານ


ບົດທີ ໑໐ ແນະນຳຟີມ " ສຽງປືນທົ່ງໄຫຫີນ " ........... ໗໕

ບົດທີ ໑໑ ((ກອງພົນທີສອງ)) ຄັດຈ້ອນ ................ ໘໒

ບົດທີ ໑໒ ((ກອງພົນທີສອງ)) ຄັດຈ້ອນ ................ ໙໖

ບົດທີ ໑໓ ((ພັດພາກຈາກສີພົມດອນ)) ຄັດຈ້ອນ ........... ໑໐໗

ບົດທີ ໑໔ ((ພັດພາກຈາກສີພົມດອນ)) ຄັດຈ້ອນ ........... ໑໑໗

ບົດທີ ໑໕ ((ເສັ້ນທາງເພງຊີວິດ)) ຄັດຈ້ອນ ............. ໑໒໗

ບົດທີ ໑໖ ((ເສັ້ນທາງເພງຊີວິດ)) ຄັດຈ້ອນ ............. ໑໔໑

ບົດທີ ໑໗ ຄຳສາລະພາບຂອງຄົນຮັກ .................. ໑໕໒

ບົດທີ ໑໘ ສິ່ງທີ່ຄວນຮູ້ກ່ຽວກັບອົງການສະຫະປະຊາຊາດ....... ໑໖໙

篇首语（1－4课）：老挝上寮的华潘省、川圹省，中寮的万象省、甘蒙省，下寮的沙湾拿吉省，在老挝也有较高的地位和影响，不过，其影响远不如万象市、琅勃拉邦和占巴塞那么大。说到万象：有老挝之象征的塔銮；琅勃拉邦：普西山和挝宫的景色吸引着众多的国内外游客；占巴塞，有与吴哥窟齐名的瓦普古城遗址，远古辉煌盛世，可见一斑。然而，下里巴人与阳春白雪，千秋各一，本册所介绍的省份，同样拥有令人赏心悦目的风景名胜，具有一定的经济、社会和历史价值，特点突出，各具优势，要全面了解老挝，这部份是不可或缺的。

## ບົດທີ ໑

## ແຂວງຊຽງຂວາງ

ແຂວງຊຽງຂວາງເປັນແຂວງໜຶ່ງທີ່ຖືກທຳລາຍຈາກພວກຈັກກະພັດຕ່າງຊາດ ຈົນເຫລືອແຕ່ຊາກຫັກພັງ. ຕັ້ງຢູ່ພາກກາງຂອງ ສ.ປ.ປ.ລາວ ( ທີ່ຈິງແລ້ວ ແມ່ນຢູ່ພາກກາງຂອງລາວ ແຕ່ດຽວນີ້ ທຳມະດາວ່າຢູ່ພາກເໜືອຂອງລາວ ) ເປັນເຂດພູພຽງ ມີເນື້ອທີ່ທັງໝົດ ໑໗.໓໑໕ ກິໂລແມັດມົນທົນ ມີພົນລະເມືອງ ໑໘໖.໐໐໐ ຄົນ ປະກອບດ້ວຍ ໖ ຕົວເມືອງ ເຊັ່ນ: ເມືອງແປກ ເມືອງຄຳ ເມືອງໜອງແຮດ ເມືອງຄູນ ເມືອງໝອກໃໝ່ ແລະເມືອງພູກູດ. ມີຊາຍແດນຕິດກັບແຂວງຫົວພັນ ແຂວງຫລວງພະບາງ ແຂວງວຽງຈັນ ແຂວງບໍລິຄຳໄຊ ແລະ ປະເທດ ສ. ສ. ຫວຽດນາມ.

ເມືອງພວນ (ເມືອງຄູນ) ແຂວງຊຽງຂວາງ ເປັນເມືອງໜຶ່ງທີ່ເກົ່າແກ່ທີ່ສຸດຂອງລາວ ຕັ້ງຢູ່ພາກເໜືອຂອງ ສ.ປ.ປ.ລາວ ເມືອງນີ້ໄດ້ມີຊື່ສຽງດັງດັງທົ່ວໂລກ ກໍຍ້ອນເປັນເມືອງພິລະອາດຫານໃນສະໄໝສົງຄາມ ແລະທັງເປັນເມືອງທີ່ມີຮ່ອງຮອຍປະຫວັດສາດເກົ່າແກ່ແລະສຳຄັນ ນັ້ນກໍຄືໄຫຫີນໃຫຍ່ເປັນຈຳນວນຫລວງຫລາຍຢັ້ງຢາຍຢູ່ເປັນກຸ່ມກ້ອນຢູ່ບໍລິເວນພູພຽງຊຽງຂວາງ.

ເມືອງພວນຊຽງຂວາງ ມີເຈົ້າກະສັດປົກຄອງມາແລ້ວ ໔໓ ພະອົງ ເປັນອານາຈັກ ຫລື ແຄວ້ນໜຶ່ງທີ່ໃຫຍ່ ໃນສະໄໝກ່ອນ ເຈົ້າຟ້າງຸ່ມທ້ອນໂຮມລາວໃນກາງສະຕະວັດທີ ໑໔ ແລະ ເປັນເມືອງທີ່ມີຮ່ອງຮອຍວັດທະນະທຳບູຮານຫລາຍ ມີຕຳນານພົງສາວະດານກ່າວສືບໆກັນມາ.

## ທົ່ງໄຫຫີນ

ໄຫຫີນເມືອງພວນແຂວງຊຽງຂວາງ ເປັນໄຫຫີນທີ່ຜະລິດມາຈາກຫີນກ້ອນໃຫຍ່ ມີຈຳນວນຫລາຍຢັ້ງຢາຍໄປທົ່ວເຂດພູພຽງຊຽງຂວາງ ຈຶ່ງໄດ້ຂະໜານນາມ (ຂະໜານຊື່)ວ່າ ທົ່ງໄຫຫີນ. ໄຫຫີນໜ່ວຍທີ່ໃຫຍ່ທີ່ສຸດ ສູງ ໓,໔໕ ແມັດ ແລະ ປາກກວ້າງ ໓ ແມັດ ທົ່ງໄຫຫີນຫ່າງຈາກເມືອງໂພນສະຫວັນ ປະມານ ໗ ກິໂລແມັດ ຊຶ່ງເປັນເມືອງເອກຂອງແຂວງຊຽງຂວາງ.

ຂໍ້ພິສູດກ່ຽວກັບໄຫຫີນອັນແທ້ຈິງຂອງໄຫຫີນດັ່ງກ່າວ ແມ່ນຍັງບໍ່ທັນມີໃຜ



此为试读，需要完整PDF请访问： www.ertongbook.com

ສາມາດຢັ້ງຢືນແນ່ນອນວ່າ: ເພິ່ນແຕ່ງກ້ອນຫີນເຫລົ່ານີ້ໄວ້ເພື່ອເຮັດຫຍັງ. ພຽງແຕ່ສັນນິຖານວ່າ:

໑. ອາດຈະຕັດປາດ ຫລື ເຈາະມາຈາກຫີນກ້ອນໃຫຍ່ຈຳນວນຫນຶ່ງ ຊຶ່ງເຮັດໄວ້ ເພື່ອບັນຈຸຄົນຕາຍໃນສະໄຫມກ່ອນຫລາຍພັນປີມາແລ້ວ ( ກ່ອນປະຫວັດສາດຍຸກສະໄຫມໂລຫະ ໓໐໐໐ - ໔໐໐໐ ປີ) ຕາມການເຊື່ອຖືຂອງຄົນໃນຍຸກນັ້ນ ບ່ອນທີ່ຝັງສົບຄົນຕາຍຕ້ອງຮັກສາໄວ້ທີ່ບ່ອນສູງເພື່ອຫລີກເວັ້ນການເຊາະເຈື່ອນຈາກນ້ຳຕ່າງໆ ສະນັ້ນ ຈຶ່ງເຫັນໄຫຫີນຢູ່ບ່ອນທີ່ເປັນເນີນສູງ.

໔. ອາດຈະເປັນໄຫເຫລົ້າຂອງນັກລົບບູຮານ ຄືຕາມຕຳນານກ່າວໄວ້ວ່າ ລະຫວ່າງສະຕະວັດທີ ໖ ນັກລົບຜູ້ກ້າຫານຂອງລາວຜູ້ຫນຶ່ງຊື່ວ່າທ້າວເຈືອງ ໄດ້ຍົກກຳລັງພົນໄປທຳສົງຄາມ ແລ້ວກໍໄດ້ຮັບໄຊຊະນະຢູ່ທີ່ຊຽງຂວາງ ຫລັງຈາກໄດ້ຮັບໄຊຊະນະແລ້ວ ກໍໄດ້ທຳການສະຫລອງໄຊຢູ່ທີ່ນັ້ນເປັນເວລາ ໗ ເດືອນ ໄຫທີ່ເຫັນຢູ່ໃນປະຈຸບັນນີ້ ເປັນໄຫເຫລົ້າສຳລັບລ້ຽງໄພ່ພົນ (ພົນທະຫານ) ໃນການສະຫລອງໄຊຂອງທ້າວເຈືອງໃນປາງນັ້ນ ດັ່ງນັ້ນ ຄົນລາວທົ່ວໄປຈຶ່ງມັກເອີ້ນວ່າ: ໄຫເຫລົ້າເຈືອງ.

## ເມືອງຄູນ (ເມືອງພວນ)

ເມືອງຄູນ ມີຊື່ເດີມວ່າ ເມືອງພວນ ຕັ້ງຢູ່ຫ່າງຈາກເມືອງໂພນສະ

ຫ່າງປະມານ ໓໕ ກິໂລແມັດ. ກ່ອນສົງຄາມຕ້ານຈັກກະພັດຕ່າງຊາດ ເມືອງພວນ ກໍເຄີຍເປັນເມືອງປະຫວັດສາດຂອງແຂວງຊຽງຂວາງ ແລະ ມີສະຖານທີ່ບູຮານມາກມາຍຫລາຍບ່ອນ ເຊັ່ນ: ວັດສີພົມ ວັດເພຍວັດ ວັດທາດຈອມເພັດ ວັດທາດຝຸ່ນ ... ຊຶ່ງແຕ່ລະວັດດັ່ງກ່າວນັ້ນ ຕາມການເລົ່າຂອງຜູ້ເຖົ້າຜູ້ແກ່ວ່າ ເປັນວັດທີ່ສ້າງຂຶ້ນກ່ອນສະໄຫມເຈົ້າຟ້າງຸ່ມ ປະມານ ໔໐໐ ກວ່າປີ. ຕາມການເລົ່ານິທານຂອງເຖົ້າແກ່ບອກວ່າ: ໃນເມື່ອກ່ອນ ໄດ້ມີການແຂ່ງຂັນກັນລະຫວ່າງຍິງແລະຊາຍ ເພື່ອສ້າງວັດ ວ່າໃຜຈະມີຄວາມສາມາດ ສ້າງໃຫ້ແລ້ວໄວກວ່າກັນ ຊຶ່ງຝ່າຍຍິງໄດ້ສ້າງວັດເພຍວັດ ແລະ ວັດທາດຈອມເພັດ ສ່ວນຝ່າຍຊາຍແມ່ນສ້າງວັດສີພົມ ພົນສຸດທ້າຍ ແມ່ນຝ່າຍຍິງສາມາດສຳເລັດກ່ອນຝ່າຍຊາຍ ຍ້ອນວ່າ ຝ່າຍຊາຍຖືກເສຍລັບຈາກຝ່າຍຍິງ.

ສຳລັບທາດຝຸ່ນທີ່ສ້າງໄວ້ຢູ່ເທິງຈອມພູນັ້ນ ແມ່ນສ້າງໄວ້ເພື່ອບັນຈຸຝຸ່ນສົບຂອງພະພຸດທະເຈົ້າ ແລະ ມີສິ່ງຂອງທີ່ສຳຄັນຫລາຍຢ່າງ ບັນຈຸຢູ່ຂ້າງໃນທາດດັ່ງກ່າວ. ພາຍຫລັງຖືກສົງຄາມທຳລາຍຫັກພັງ ກໍມີຄົນໄປລັກຂຸດຄົ້ນເອົາສິ່ງຂອງທີ່ສຳຄັນ ໄປຈົນຫມົດ ຊຶ່ງໃນປະຈຸບັນ ຍັງເຫລືອໄວ້ພຽງແຕ່ຊາກຫັກພັງເທົ່ານັ້ນ.

ພາຍຫລັງສົງຄາມ ຄ.ສ. ໑໙໗໕ ສະຖານບູຮານດັ່ງກ່າວ ຕະຫລອດ

ຮອດບ້ານເຮືອນຂອງປະຊາຊົນທັງໝົດ ກໍໄດ້ຖືກທຳລາຍລົງຢ່າງໜ້າເສຍດາຍ ເຫຼືອໄວ້ພຽງແຕ່ຊາກຫັກພັງ ເພື່ອເປັນສິ່ງສະແດງໃຫ້ເຫັນຄວາມໂຫດຮ້າຍຂອງສົງຄາມ.

ປະຈຸບັນນີ້ ໄດ້ມີການບູລະນະກໍ່ສ້າງສ້ອມແປງຂຶ້ນໃໝ່ ແລະ ມີຫລາຍສິ່ງຢ່າງໄດ້ມີການປ່ຽນແປງໂສມໜ້າຂອງແຂວງຊຽງຂວາງ.

<u>ບ້ານທ່າໂຈກ</u>

ບ້ານທ່າໂຈກນີ້ ເປັນບ້ານທີ່ມີພົນລະເມືອງຫລາຍຊົນເຜົ່າອາໄສຢູ່ ແຕ່ສ່ວນຫລາຍແມ່ນເຜົ່າລາວສູງ (ເຜົ່າມົ້ງ) ຕັ້ງຢູ່ຫ່າງຈາກເມືອງໂພນສະຫວັນປະມານ ໓໐ ກິໂລແມັດ ຕາມເສັ້ນທາງເລກ ໗ (ຕິດຕໍ່ເສັ້ນທາງເລກ ໑໓ ກັບຊາຍແດນລະຫວ່າງລາວ-ຫວຽດນາມ). ການທຳມາຫາກິນແມ່ນເຮັດໄຮ່ ແລະ ລ່າເນື້ອ ມີພົນລະເມືອງອາໄສຢູ່ ໔໕໘ ຄອບຄົວ.

<u>ບໍ່ນ້ຳຮ້ອນເມືອງຄຳ</u>

ບໍ່ນ້ຳຮ້ອນເມືອງຄຳນີ້ ຫ່າງຈາກເມືອງໂພນສະຫວັນໄປທາງທິດເໜືອປະມານ ໕໔ ກິໂລແມັດ ເມືອງຄຳເປັນເມືອງເກົ່າແກ່ຂອງແຂວງຊຽງຂວາງ ຢູ່ເມືອງຄຳ ມີບໍ່ນ້ຳຮ້ອນ ໖໐ ອົງສາ ຕັ້ງຢູ່ຫ່າງໄກຈາກທາງໃຫຍ່ປະມານ ໓໐໐ ແມັດ. ນອກຈາກນີ້ຊຽງຂວາງຍັງມີທິວທັດທຳມະຊາດທີ່ສວຍສົດງົດງາມ.

| | |
|---|---|
| ຊາກ (ຊາກຫັກພັງ) | 废墟、残骸、残迹 |
| ກຸ່ມກ້ອນ | 整体、整群、成群 |
| ທ້ອນໂຮມ | 汇集、汇合、统一 |
| ຂະໜານນາມ | 取名、命名 |
| ໂພນສະຫວັນ | 丰沙湾 |
| ເມືອງເອກ | 省城、省府、府城、省城 |
| ພິສູດ | 证明、证实、论证 |
| ຍຸກສະໄໝ | 时代、时期 |
| ເຊາະເຈື່ອນ | 冲蚀、腐蚀、冲刷 |
| ເນີນສູງ | 高地、丘陵、土丘 |
| ໄພ່ພົນ | 士兵、兵卒 |
| ມາກມາຍ | 众多、很多、大量 |
| ຝຸ່ນສົບ | 骨废 |
| ເຜົ່າມົ້ງ | 苗族 |
| ລ່າເນື້ອ | 打猎 |
| ອົງສາ | 度、度数（温度、角度、经纬度） |

ບົດທີ ໔

## ແຂວງຫົວພັນ

ແຂວງຫົວພັນ ແຕ່ກ່ອນມີຊື່ວ່າແຂວງຊຳເໜືອ. ແຂວງຫົວພັນກັບແຂວງຊຳເໜືອ ຊື່ຂອງມັນເຄີຍຫັນປ່ຽນໄປຫັນປ່ຽນມາເປັນຫລາຍເທື່ອ.

ແຂວງຫົວພັນ ຕັ້ງຢູ່ທິດຕາເວັນອອກສຽງເໜືອຂອງ ສ.ປ.ປ. ລາວ ເປັນແຂວງທີ່ເປັນຂອງການປະຕິວັດລາວໃນສະໄໝຕໍ່ສູ້ກູ້ຊາດ ຕ້ານຈັກກະພັດຕ່າງຊາດທີ່ເຂົ້າມາຮຸກຮານ. ມີເນື້ອທີ່ທັງໝົດ ໑໖,໕໐໐ ກິໂລແມັດມົນທົນ ມີພົນລະເມືອງປະມານ ໒໔໖.໑໐໐ ຄົນ ປະກອບດ້ວຍ ໖ ເມືອງ ເຊັ່ນ: ເມືອງວຽງໄຊ ເມືອງຊຳເໜືອ ເມືອງຊຳໃຕ້ ເມືອງວຽງທອງ ເມືອງຫົວພັນ ເມືອງຊຽງຄໍ້ ລວມມີ ມີ ອິນເຜົ່ານ້ອຍ ແລະ ມີ ອິນເຜົ່າໃຫຍ່ລາວລຸ່ມ ລາວເທິງ ລາວສູງ ມີຊາຍແດນຕິດກັບ ແຂວງຊຽງຂວາງ ແຂວງຫລວງພະບາງ ແລະ ປະເທດຫວຽດນາມ. ເມືອງເອກແມ່ນຢູ່ເມືອງຊຳເໜືອ.

ເມືອງວຽງໄຊ ເປັນດິນແດນທີ່ສວຍງາມ ແລະ ພິລະອາດຫານ. ທິວທັດທຳມະຊາດ ພູຜາປ່າໄມ້ທີ່ຂຽວສົດງົດງາມ ແລະ ທົ່ງນາຍາວຢຽດໄປຕາມຫວ່າງພູຜາຫີນຢ່າງງາມຕາເປັນສິ່ງປະລັບຂອງເມືອງ. ດິນແດນເຫົ່ານີ້ເດີມມີຊື່ວ່າ: ທົ່ງນາໄກ່ ຍ້ອນຢູ່ເຂດນີ້ ມີໄກ່ປ່າຫລາຍ ພາຍຫລັງສົງຄາມໄດ້ຍຸດຕິລົງ

ທົ່ງນາໄກ່ໄດ້ປ່ຽນຊື່ມາເປັນເມືອງວຽງໄຊ ຢູ່ບໍລິເວນນີ້ປະກອບມີ ໔ ບ້ານ ທິດເໜືອແມ່ນບ້ານລ້ອງກູ້ ທິດໃຕ້ແມ່ນບ້ານຊຽງຊື່ແລະບ້ານນາໄກ່ໃຕ້ ທິດຕາເວັນຕົກສຽງເໜືອແມ່ນບ້ານບັກ, ຢູ່ໃຈກາງແມ່ນບ້ານນາໄກ່ເໜືອ. ທິດຕາເວັນຕົກຕິດກັບສາຍພູຊຽງ ແລະ ທິດຕາເວັນອອກຕິດກັບສາຍທາງເລກ ໖. ສະຖານທີ່ແຫ່ງນີ້ ເປັນພູຜາຫີນທີ່ເຕັມໄປດ້ວຍຖ້ຳທຳມະຊາດ ລວມທັງໝົດມີ ໑໐໘ ຖ້ຳ ຊຶ່ງປະກອບດ້ວຍຖ້ຳທີ່ສຳຄັນ ເຊັ່ນ:

<u>ຖ້ຳທ່ານປະທານສຸພານຸວົງ</u>

ຊຶ່ງເດີມເອີ້ນວ່າ ຖ້ຳຜາປຸ່ງ ແຕ່ກ່ອນຢູ່ແຫ່ງນີ້ເປັນປ່າດົງດິບໜາ ມີສັດຕ່າງໆ ເຊັ່ນ: ກວາງ ຟານ ແລະ ສັດອື່ນໆອາໄສຢູ່ ເຂດນີ້ມີປຸ່ງນ້ຳ ສັດທັງຫຼາຍທຽວເຂົ້າທຽວອອກກິນນ້ຳຢູ່ປຸ່ງນີ້ ດັ່ງນັ້ນ ປະຊາຊົນຢູ່ເຂດນີ້ຈຶ່ງເອີ້ນວ່າຖ້ຳຜາປຸ່ງ ໃນຕົ້ນປີ ໑໙໖໔ ທ່ານປະທານສຸພານຸວົງ ໄດ້ຍ້າຍສຳນັກເຂົ້າມາຢູ່ຖ້ຳແຫ່ງນີ້ ໃນຂັ້ນຕົ້ນ ກໍແມ່ນອາໄສຖ້ຳທຳມະຊາດ ແຕ່ຕໍ່ມາກໍໄດ້ເສີມປັບແປງເປັນບ່ອນພັກອາໄສ ຊຶ່ງລວມມີຫຼາຍຫ້ອງ ຄື: ຫ້ອງປ້ອງກັນ ຫ້ອງນອນ ຫ້ອງປະຊຸມ ຢູ່ນອກຖ້ຳ ມີຫ້ອງນ້ອຍ ຊຶ່ງເປັນຫ້ອງຄົວກິນ ນອກນັ້ນ ຍັງມີເຮືອນນ້ອຍຫຼັງໜຶ່ງ ຊຶ່ງໄດ້ປຸກໃຫ້ທ່ານປະທານສຸພານຸວົງອາໄສຢູ່ພາຍຫຼັງສົງຄາມ ເພື່ອລໍຖ້າການສ້າງເຮືອນຫຼັງໃໝ່ສຳເລັດ.



此为试读,需要完整PDF请访问: www.ertongbook.com

## ຖ້ຳທ່ານປະທານໄກສອນ. ພົມວິຫານ

ຊື່ເດີມເອີ້ນວ່າ ຖ້ຳປ່ອນຊອງ ເພາະກ່ອນຢູ່ຖ້ຳນີ້ມີເຜິ້ງຫລາຍ ປະຊາຊົນຢູ່ເຂດນີ້ ຕ້ອງການຢາກໄດ້ເຜິ້ງ ແຕ່ຂຶ້ນໄປບໍ່ໄດ້ ຈຳເປັນຕ້ອງໄດ້ປີນຂຶ້ນເທິງຜາ ແລະ ໄດ້ເອົາເຊືອກຢ່ອນລົງມາເພື່ອເອົາເຜິ້ງ ຈຶ່ງໄດ້ເອີ້ນວ່າ " ຖ້ຳປ່ອນຊອງ " ຖ້ຳນີ້ເປັນຖ້ຳທຳມະຊາດ ມີ ໔ ຖ້ຳຕິດຕໍ່ກັນ. ໃນປີ ໑໙໖໔ ທ່ານປະທານໄກສອນ. ພົມວິຫານ ໄດ້ຍົກຍ້າຍເຂົ້າມາ ໃນຂັ້ນຕົ້ນກໍ່ຢູ່ຖ້ຳທຳມະຊາດ ແຕ່ຕໍ່ມາໄດ້ປັບແປງ ແລະ ໄດ້ເຈາະ ໔ ຖ້ຳນີ້ໃຫ້ຊອດໃສ່ກັນ ຊຶ່ງມີລວມຍາວ ໑໔໐ ແມັດ ຖ້ຳນີ້ເປັນຖ້ຳທີ່ສູງກວ່າໜ້າດິນ ຈົນໄດ້ເຮັດຂັ້ນໄດຂຶ້ນໄປເຖິງ ໓໔ ຂັ້ນ ຖ້ຳນີ້ ປະກອບມີຫ້ອງປ້ອງກັນ ຫ້ອງຮັບແຂກສູນກາງພັກແລະແຂກຕ່າງປະເທດ ຫ້ອງປະຊຸມ ຫ້ອງສະໂມສອນຊຶ່ງເປັນສະຖານທີ່ຫລິ້ນກິລາແລະສິນລະປະຕ່າງໆ (ການສະແດງສິນລະປະ) ໂດຍສະເພາະ ທ່ານປະທານໄກສອນ. ພົມວິຫານມັກຫລິ້ນກິລາ ເປັນຕົ້ນແມ່ນກິລາປິງປ່ອງ ນອກຈາກນີ້ຍັງມີຫ້ອງຄົ້ນຄວ້າ ຫ້ອງນອນ ...

ຢູ່ປາກຖ້ຳໃຫຍ່ ມີຖ້ຳນ້ອຍຊຶ່ງເປັນຖ້ຳຄົວກິນໃນເວລາສົງຄາມ ໃນຕົ້ນປີ ໑໙໗໓ ແລ້ວຈຶ່ງໄດ້ສ້າງເຮືອນຫລັງໜຶ່ງໃຫ້ທ່ານປະທານໄກສອນ. ພົມວິຫານອາໄສຢູ່ ແຕ່ບໍ່ທັນສົມບູນ ຊຶ່ງໄດ້ເອົາໄມ້ມຸງຊົ່ວຄາວ ເພື່ອລໍຖ້າການສ້າງເຮືອນ

ຫລັງໃຫມ່ ພາຍຫລັງກໍ່ສ້າງເຮືອນສໍາເລັດແລ້ວ ທ່ານໄກສອນໄດ້ເຂົ້າອຽງຈັນ ກ່ອນ ເຮືອນຫລັງນີ້ໄດ້ກາຍເປັນບ່ອນເກັບມ້ຽນເອກະສານແລະພັດສະດຸຕ່າງໆ ທີ່ເປັນປະຫວັດສາດ.

## ຖ້ຳທ່ານຄໍາໄຕ ສີພັນດອນ

ເມັ່ນພາກສ່ວນຫນຶ່ງຂອງຖ້ຳຊ້າງລອດ ຢູ່ເທິງນີ້ ບໍ່ເມັ່ນຖ້ຳທໍາມະຊາດ ໄດ້ໃຊ້ກໍາລັງແຮງ ແລະ ເຄື່ອງຈັກເຈາະເປັນຖ້ຳໃຫ້ທ່ານຄໍາໄຕ ສີພັນດອນ ອາໄສຢູ່ ຊຶ່ງປະກອບມີຫ້ອງປະຊຸມຂອງນາຍທະຫານຂັ້ນສູງ ທັງເປັນຫ້ອງຮັບແຂກພາຍໃນແລະຕ່າງປະເທດ, ຫ້ອງຄົ້ນຄ້ວາ , ຫ້ອງນອນ. ລົງຈາກຖ້ຳທ່ານຄໍາໄຕ ສີພັນດອນ ເມັ່ນໄປຮອດຖ້ຳຊ້າງລອດ ຄື ຫ້ອງການເມືອງ ຫ້ອງພະລາ(ພະລາທິການ). ເສັ້ນທາງທີ 4 ໄປຮອດຫ້ອງເສນາທິການສູງສຸດ ຊຶ່ງເປັນເສັ້ນທາງທີ່ຫຍຸ້ງຍາກ ຢູ່ເຂດນັ້ນ ຍັງຮັກສາຂຸມປືນໃຫຍ່ໄວ້ສາມຂຸມ.

## ຖ້ຳຊ້າງລອດ

ເມັ່ນຖ້ຳທໍາມະຊາດທີ່ໃຫຍ່ກວ່າຫມູ່ ກ່ອນຈະໃສ່ຊື່ວ່າຖ້ຳຊ້າງລອດ ກໍ່ຍ້ອນວ່າປະຊາຊົນເຄີຍເລົ່າລືກັນວ່າ: ຖ້ຳນີ້ເປັນຖ້ຳໃຫຍ່ຈົນຊ້າງສາມາດລອດໄປມາໄດ້ຢ່າງສະບາຍ ສະນັ້ນ ຈຶ່ງໃສ່ຊື່ວ່າ " ຖ້ຳຊ້າງລອດ ". ຖ້ຳນີ້ໄດ້ຖືກຂີດແບ່ງຈໍານວນຫນຶ່ງ ເຮັດເປັນຖ້ຳສະໂມສອນ ເປັນສະຖານທີ່ໂຮມ

ຊຸມນຸມ ວັນບຸນທີ່ສຳຄັນຕ່າງໆ ຮັບຕ້ອນແຂກຂັ້ນສູງຕ່າງປະເທດມາຢັ້ງມຢາມ ແລະ ທັງເປັນບ່ອນສະແດງສິນລະປະ ກາຍຍະກຳ (ກາຍຍະສິນ) ແລະຫລິ້ນກິລາບາງປະເພດ.

**词汇:**

| | |
|---|---|
| ຢຽດ (ຍາວຢຽດ) | 延伸、伸展、伸 |
| ຫວ່າງ | 空间、空隙、时间 |
| ຍຸດຕິລົງ | 结束、终止 |
| ດິບ | 新鲜的、生的、 |
| ໜາ | 密、茂密 |
| ກວາງ | 鹿 |
| ຟານ | 麋鹿 |
| ປຸ່ງນ້ຳ | 泉眼、泉口、自流井 |
| ຜາ | 悬崖、山 |
| ຂັ້ນຕົ້ນ | 起初、开始 |

| | |
|---|---|
| ປຸກ ( ສ້າງ ) | 建、造 |
| ຢ່ອນ | 放松、松缓、降低、放低 |
| ເຜີ້ງ | 蜂巢；蜂蜜 |
| ປີນ (ປີນໄຕ່) | 登上、爬上、攀登 |
| ຊອດ | 通向、相通 |
| ມຸງ | 盖、遮、覆、围聚、围拢 |
| ພັດສະດຸ | 物品、东西 |
| ລອດ | 钻、穿过、潜入、逃脱 |
| ພະລາ (ພະລາທິການ) | 后勤 |
| ເສນາທິການ (ເສນາທິການໃຫຍ່) | 参谋 (参谋长) |
| ຊຸມນຸມ | 汇集、汇聚、集合、集会 |
| ກາຍຍະກຳ | 竞技 |

## ບົດທີ ៣

## ແຂວງວຽງຈັນ

ແຂວງວຽງຈັນເປັນແຂວງໜຶ່ງທີ່ເຄີຍຂຶ້ນກັບກຳແພງນະຄອນວຽງຈັນ ຊຶ່ງໄດ້ແຍກຈາກກັນໃນປີ ១៩៨៣ ລວມມີ ៧ ເມືອງ ເຊັ່ນ: ເມືອງໂພນໂຮງ ເມືອງແກ້ວອຸດົມ ເມືອງທຸລະຄົມ ເມືອງກາສີ ເມືອງຮົ່ມ ເມືອງຊະນະຄາມ ເມືອງເຟືອງ ເມືອງໄຊສົມບູນ ແລະ ເມືອງວັງວຽງ. ເມືອງເອກຕັ້ງຢູ່ ເມືອງໂພນໂຮງ. ເມືອງວັງວຽງ ປະຈຸບັນ ພວມໄດ້ຮັບການພັດທະນາແລະ ເອົາໃຈໃສ່ເປັນພິເສດຈາກອຳນາດການປົກຄອງແຂວງວຽງຈັນ. ທົ່ວແຂວງ ມີເນື້ອທີ່ທັງໝົດ ១៩.៩៩០ ກິໂລແມັດມົນທົນ ມີພົນລະເມືອງທັງໝົດປະມານ ៣១៣.000 ຄົນ ມີຊາຍແດນຕິດກັບແຂວງຫລວງພະບາງ ແຂວງຊຽງຂວາງ ແຂວງບໍລິຄຳໄຊ ແຂວງໄຊຍະບູລີ ແລະ ກຳແພງນະຄອນວຽງຈັນ.

ແຂວງວຽງຈັນ ເປັນແຫລ່ງອຸດົມສົມບູນ ເຕັມໄປດ້ວຍຊັບພະຍາກອນ ທຳມະຊາດ ແລະ ມູນມໍລະດົກອັນລ້ຳຄ່າ ເຊັ່ນ: ມີປ່າໄມ້ດົງໜາ ແລະສາຍ ນ້ຳລຳທານທີ່ໃສເຢັນຊຶ່ງເປັນແຫລ່ງກຳເນີດອູ່ເຂົ້າອູ່ປາ ຂອງການທຳມາຫາ ລ້ຽງຊີບຂອງປະຊາຊົນໃນຂົງເຂດນີ້.

ອ່າງນ້ຳງື່ມ ຖືກສ້າງຂຶ້ນດ້ວຍການສ້າງເຂື່ອນເພື່ອຜະລິດກະແສໄຟຟ້າ

ໄປຮັບໃຊ້ຊີວິດການເປັນຢູ່ຂອງປະຊາຊົນ ແລະນຳສິ່ງອອກມາຂາຍຕ່າງປະເທດ (ເປັນຕົ້ນຂາຍໃຫ້ປະເທດໄທ) ນອກຈາກນັ້ນ ອ່າງນ້ຳງື່ມຍັງເປັນແຫຼ່ງທ່ອງທ່ຽວທີ່ສຳຄັນ ແລະ ສວຍງາມອີກບ່ອນໜຶ່ງຂອງປະເທດລາວ ນະທີ່ນີ້ ທ່ານຈະໄດ້ສຳຜັດກັບທຳມະຊາດອັນແທ້ຈິງ ໂດຍສະເພາະແລ້ວ ຊາວນະຄອນຫລວງວຽງຈັນແລະຊາວຕ່າງປະເທດ ຈະໃຊ້ເປັນບ່ອນພັກຜ່ອນ ວັນພັກທ້າຍອາທິດ ໂດຍການຂີ່ເຮືອລ່ອງລອຍໄປຕາມໝູ່ເກາະດອນນ້ອຍໃຫຍ່ຕ່າງໆ ເວລາກັບເຖິງຝັ່ງ ທ່ານກໍຈະສາມາດແວ່ຮັບປະທານອາຫານຖ້ວຍເນື້ອປາສົດໆ.

ເມື່ອມຸ່ງໜ້າໄປຕາມເສັ້ນທາງເລກທີ ໑໓ ເໜືອທີ່ຄົດລ້ຽວ ໄປຕາມຮ່ອມພູ ປະມານ ໑໕໘ ກິໂລແມັດ ຈາກກຳແພງນະຄອນວຽງຈັນກໍຈະເຖິງເມືອງວັງວຽງ ຊຶ່ງເປັນເມືອງທີ່ອາກາດຂ້ອນຂ້າງໜາວເຢັນແລະມີທຳມະຊາດທີ່ສວຍສົດງົດງາມ ປຽບສະເໝືອນກັບເຄື່ອງປະດັບຂອງເມືອງນີ້ ຄື ຜາຕັ້ງວັງວຽງ, ຖ້ຳຈັງ ແລະ ສາຍນ້ຳຂອງເປັນມຸ່ງຂວັນຂອງຊາວເມືອງຊຶ່ງໃຜກໍບໍ່ອາດຈະຫລົງລືມໄດ້ ເຊັ່ນດຽວກັບຜາທີ່ - ໜໍ່ຄຳ ບໍ່ສະເພາະແຕ່ເທົ່ານັ້ນ ວັງວຽງຍັງເປັນດິນແດນແຫ່ງ "ເຂົ້າຂາວ - ສາວງາມ - ປະຊາຊົນຄຸໜັ້ນອາດຫານ" ຕັ້ງແຕ່ປູ່ຍ່າຕາຍາຍຊຶ່ງໄດ້ມູນມໍລະດົກທາງດ້ານສິນລະປະວັດທະນະທຳສືບທອດມາໃຫ້ລູກຫລານເທົ່າທຸກວັນນີ້.



此为试读,需要完整PDF请访问: www.ertongbook.com